# CYSHCN ແມ່ນໃຜ?

**CYSHCN ແມ່ນເດັກນ້ອຍຜູ້ທີ່:**

- **ມີ ຫຼື ອາດຈະມີ*** ພະຍາດຊຳເຮື້ອທາງຮ່າງກາຍ, ການພັດທະນາ, ພຶດຕິກຳ ຫຼື ສຸຂະພາບທາງຈິດ
- ຕ້ອງມີສຸຂະພາບ ແລະ ການບໍລິການທີ່ກ່ຽວຂ້ອງ **ປະເພດ ຫຼື ຈຳນວນໃດໜຶ່ງທີ່ຈຳເປັນໂດຍທົ່ວໄປ** ສຳລັບເດັກນ້ອຍ

ເດັກນ້ອຍ




ໃນລັດວໍຊິງຕັນຕ້ອງການ ການດູແລສຸຂະພາບພິເສດ



## ນັ້ນແມ່ນ ໜຶ່ງໃນຫ້າຄົນ!

19.7% ຂອງເດັກນ້ອຍທີ່ມີອາຍຸ 0-17 ປີ ມີຄວາມຕ້ອງການການດູແລສຸຂະພາບພິເສດ

**ແຫຼ່ງຂໍ້ມູນ:** National Survey of Children's Health 2019-20, Health Resources and Services Administration (ຂອງໜ່ວຍງານບໍລິຫານແຫຼ່ງໃຫ້ການຊ່ວຍເຫຼືອດ້ານສາທາລະນະສຸກ ແລະ ການບໍລິການ), Maternal and Child Health Bureau (ສຳນັກງານດູແລສຸຂະພາບແມ່ ແລະ ເດັກ)

*ມີຄວາມສ່ຽງເພີ່ມຂຶ້ນເນື່ອງຈາກບັນຫາທາງຊີວະພາບ (ເຊັ່ນ: ເງື່ອນໄຂທາງພັນທຸກຳ) ຫຼື ປັດໃຈສິ່ງແວດລ້ອມທີ່ກ່ຽວຂ້ອງກັບການພັດທະນາຂອງພະຍາດຊຳເຮື້ອ.

# ໃຜສາມາດຊ່ວຍຂ້າພະເຈົ້າຫາການບໍລິການໄດ້?

***ພວກເຮົາຮ່ວມມືກັບ:***

## *ຜູ້ປະສານງານ CYSHCN ປະຈຳທ້ອງຖິ່ນ*

ສະໜັບສະໜູນຄອບຄົວ ແລະ ຊ່ວຍເຊື່ອມໂຍງເຂົາເຈົ້າກັບແຫຼ່ງຂໍ້ມູນ ແລະ ສະຖານທີ່ໃຫ້ການດູແລທີ່ເຂົາເຈົ້າຕ້ອງການ. ພວກເຂົາສາມາດຊ່ວຍ (ເປັນພາສາອັງກິດເທົ່ານັ້ນ) ເຊື່ອມໂຍງທ່ານກັບ:

- ປະກັນໄພ
- ການເຂົ້າຊ່ວຍເຫຼືອເບື້ອງຕົ້ນ
- ແຫຼ່ງໃຫ້ການຊ່ວຍເຫຼືອສຳລັບຄວາມຈຳເປັນທີ່ຍັງບໍ່ບັນລຸ
- ການໃຫ້ບໍລິການທີ່ກ່ຽວຂ້ອງກັບຄວາມພິການ
- ການປິ່ນປົວ ແລະ ການໃຫ້ບໍລິການພິເສດ

## *ສາຍດ່ວນ Help Me Grow Washington 1 (800) 322-2588*

ທ່ານມີຄຳຖາມກ່ຽວກັບສຸຂະພາບ ຫຼື ຄວາມຕ້ອງການການພັດທະນາຂອງລູກທ່ານບໍ? ໂທຫາສາຍດ່ວນ WithinReach Help Me Grow Washington ເພື່ອໂອ້ລົມກັບຜູ້ໃຫ້ການຊ່ວຍເຫຼືອຄອບຄົວ ແລະ ຊອກຫາຄຳຕອບ! ພວກເຂົາສາມາດຊ່ວຍທ່ານຫາແຫຼ່ງໃຫ້ການຊ່ວຍເຫຼືອໄດ້ໂດຍທີ່ບໍ່ໄດ້ເສຍຄ່າ ຫຼື ລາຄາຖືກໃນພື້ນທີ່ຂອງທ່ານ ເຊັ່ນ:

- ການຊ່ວຍເຫຼືອພໍ່ແມ່ ແລະ ພີ່ນ້ອງ
- ແຫຼ່ງໃຫ້ການຊ່ວຍເຫຼືອການປ່ຽນແປງໄວລຸ້ນ
- ໂອກາດທາງດ້ານສັງຄົມ ແລະ ການພັກຜ່ອນ
- ຂໍ້ມູນການພັກຜ່ອນ
- ການຄັດກອງການພັດທະນາ
- ການດູແລສຸຂະພາບ
- ...ແລະ ອື່ນໆອີກ!

ຫາການຊ່ວຍເຫຼືອທາງອອນໄລໄດ້ທີ່ www.ParentHelp123.org (ເປັນພາສາອັງກິດເທົ່ານັ້ນ)

## *ສົ່ງການຮ້ອງຂໍການສະຫນັບສະຫນູນເຂົ້າກ່ອງຈົດໝາຍຂອງ CYSHCN*

ອີເມວ CYSHCN@doh.wa.gov
ເພື່ອປະສານກັບພະນັກງານຂອງພວກເຮົາ

# *ໂຄງການ ລັດວໍຊິງຕັນ Children & Youth with Special Health Care Needs (CYSHCN, ເດັກ ແລະ ເຍົາວະຊົນທີ່ມີຄວາມຕ້ອງການການດູແລສຸຂະພາບພິເສດ)*



## *ວິໄສທັດຂອງພວກເຮົາ*

ທຸກຄົນຈາກ CYSHCN ແລະ ຄອບຄົວຂອງເຂົາເຈົ້າເປັນ, ມີສ່ວນຮ່ວມ, ແລະ ຈະເລີນເຕີບໂຕໃນຊຸມຊົນທີ່ມີລະບົບປະສົມປະສານ, ເຂົ້າເຖິງໄດ້ຢ່າງສະເໝີພາບຕໍ່ການສະໜັບສະໜູນສຸຂະພາບທາງກາຍ ແລະ ຈິດໃຈ, ການພັດທະນາ, ສະຫວັດດີການສັງຄົມ ແລະ ຈິດໃຈຂອງເຂົາເຈົ້າ.

**doh.wa.gov/CYSHCN**

ເພື່ອຮ້ອງຂໍເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທຫາ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov

Washington State Department of Health

DOH 970-108 February 2022 Lao

# ຄວາມເປັນຜູ້ນຳຕໍ່ກັບຄອບຄົວ, ການມີສ່ວນພົວພັນ, ແລະ ຄູ່ຮ່ວມງານການສະໜັບສະໜູນ

[Partnerships for Action, Voices for Empowerment (PAVE) (ແປດ້ວຍ Google)]
ບັນດາໂຄງການ Partnerships for Action, Voices for Empowerment (PAVE, ການຮ່ວມມືເພື່ອການຈັດຕັ້ງປະຕິບັດ, ການອອກສຽງເພື່ອເສີມສ້າງຄວາມເຂັ້ມແຂງ) ຈະຊ່ວຍບັນດາຄອບຄົວຕ່າງໆ:

- [Family to Family Health Information Center (ແປດ້ວຍ Google)] ສາມາດຊ່ວຍທ່ານຊອກຫາແຫຼ່ງສະໜອງທຶນເພື່ອສະໜອງຄວາມຕ້ອງການໃນການດູແລສຸຂະພາບໄດ້
- [Lifespan Respite WA (ແປດ້ວຍ Google)] ສະໜອງທຶນໃຫ້ມີການພັກຜ່ອນໄດ້ (ການພັກຜ່ອນສັ້ນ) ສຳລັບຜູ້ເບິ່ງແຍງ
- [Parent Training and Information (PTI, ໂຄງການໃຫ້ການຊ່ວຍເຫຼືອການຝຶກອົບຮົມ ແລະ ຂໍ້ມູນແກ່ພໍ່ແມ່) (ແປດ້ວຍ Google)] ສະໜັບສະໜູນນັກຮຽນພິການ
- [Specialized Training of Military Parents (STOMP, ໂຄງການໃຫ້ການຝຶກອົບຮົມພິເສດແກ່ພໍ່ແມ່ທີ່ເປັນທະຫານ) (ແປດ້ວຍ Google)] ສະໜັບສະໜູນຄອບຄົວທະຫານ

[Parent to Parent (P2P) (ເປັນພາສາອັງກິດເທົ່ານັ້ນ)]
ໂຄງການ Parent to Parent (P2P, ພໍ່ແມ່ໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ) ທີ່ເຮັດວຽກປະຈຳທຸກເຂດຈະໃຫ້:

- ກຸ່ມໃຫ້ສະໜັບສະໜູນ ແລະ ການແບ່ງປັນກັບໝູ່ເພື່ອນແບບໜຶ່ງຕໍ່ໜຶ່ງ
- ຂໍ້ມູນຫຼ້າສຸດ ແລະ ການຝຶກອົບຮົມ
- ໂຄງການຊ່ວຍເຫຼືອໃຫ້ຄຳແນະນຳເພື່ອນຮ່ວມງານຂອງພໍ່ແມ່
- ໂຄງການ Sibshops ສຳລັບພີ່ນ້ອງຈາກ CYSHCN
- ແຫຼ່ງໃຫ້ການຊ່ວຍເຫຼືອ ແລະ ການສົ່ງຕໍ່

[Washington State Fathers Network (WSFN)]
Washington State Fathers Network (WSFN, ເຄືອຂ່າຍໃຫ້ການຊ່ວຍເຫຼືອພໍ່ຂອງລັດວໍຊິງຕັນ) ຈັດກິດຈະກຳ ແລະ ເຫດການເພື່ອພໍ່ ແລະ ຜູ້ເບິ່ງແຍງທີ່ເປັນຜູ້ຊາຍ

[ຈົດໝາຍຂ່າວ Washington State Leadership Initiative (WSLI) (ແປດ້ວຍ Google)]
ຈົດໝາຍຂ່າວກ່ຽວກັບ Washington State Leadership Initiative (WSLI, ການລິເລີ່ມການນຳພາຂອງລັດວໍຊິງຕັນ) ໄດ້ເຊື່ອມໂຍງຄອບຄົວຂອງ CYSHCN ກັບກິດຈະກຳ, ເຫດການ, ການສຳມະນາ, ກອງປະຊຸມ, ການຝຶກອົບຮົມ, ອາສາສະໝັກ ແລະ ໂອກາດວຽກເຮັດງານທຳ ແລະ ແຫຼ່ງໃຫ້ການຊ່ວຍເຫຼືອ.
[ລົງທະບຽນເຂົ້າໃຊ້ຈົດໝາຍຂ່າວ WSLI (ເປັນພາສາອັງກິດເທົ່ານັ້ນ)]





# ຄູ່ຮ່ວມງານການດູແລສຸຂະພາບ



## ເຄືອຂ່າຍດ້ານໂພຊະນາການ CYSHCN

[ເຄືອຂ່າຍດ້ານໂພຊະນາການ (ເປັນພາສາອັງກິດເທົ່ານັ້ນ)] ສະໜັບສະໜູນການບໍລິການດ້ານໂພຊະນາການໃຫ້ແກ່ CYSHCN ແລະ ຄອບຄົວຂອງເຂົາເຈົ້າ. ທ່ານສາມາດຊອກຫາຜູ້ຊ່ຽວຊານດ້ານໂພຊະນາການອາຫານທີ່ລົງທະບຽນທີ່ໄດ້ຮັບການຝຶກອົບຮົມພິເສດ (RDN) ຫຼື [ທີມງານສະໜອງໃນອາຫານຊຸມຊົນ (ເປັນພາສາອັງກິດເທົ່ານັ້ນ)].

## Neurodevelopmental Centers ເພື່ອຄວາມເປັນເລີດ (NDC)

[Neurodevelopmental Centers (NDC, ສູນພັດທະນາລະບົບປະສາດ) (ເປັນພາສາອັງກິດ ເທົ່ານັ້ນ)] ໃຫ້ບໍລິການການປິ່ນປົວທາງດ້ານອາຊີບ, ການປິ່ນປົວການເວົ້າ, ການປິ່ນປົວທາງດ້ານຮ່າງກາຍ, ແລະ ການບໍລິການສະໜັບສະໜູນອື່ນໆ. NDC ມັກຈະເປັນຄູ່ຮ່ວມງານກັບຜູ້ປະສານງານ ແລະ ຜູ້ໃຫ້ການດູແລປະຈຳທ້ອງຖິ່ນອື່ນໆ.

## Maxillofacial Review Boards

[Maxillofacial Review Boards (MFRB,ຄະນະກວດກາການດັດແປງໜ້າພາກ) (ເປັນພາສາອັງກິດເທົ່ານັ້ນ)] ຮັບປະກັນໃຫ້ຜູ້ໃຫ້ບໍລິການວາງແຜນ ແລະ ປະຕິບັດການປິ່ນປົວທີ່ມີການປະສານງານທີ່ດີສຳລັບເດັກທີ່ມີຮີມປາກແຕກ/ເປັນຊ່ອງ.

## ໂຄງການຫຸ້ນຮ່ວມມືທາງການແພດທີ່ບ້ານ

ເຂົ້າໄປທີ່ [medicalhome.org (ເປັນພາສາອັງກິດເທົ່ານັ້ນ)] ເພື່ອສຶກສາເພີ່ມເຕີມກ່ຽວກັບວິທີການເປັນຄູ່ຮ່ວມງານທີ່ມີປະສິດຕິຜົນກັບທ່ານໝໍຂອງລູກທ່ານ ແລະ ສະມາຊິກຄົນອື່ນໆຂອງທີມເບິ່ງແຍງດູແລລູກຂອງທ່ານ.

# ແຫຼ່ງໃຫ້ການຊ່ວຍເຫຼືອສຳລັບຄອບຄົວ

[ການແຈ້ງໃຫ້ຄອບຄົວຮັບຮູ້] – ໃຫ້ຂໍ້ມູນ ແລະ ແຫຼ່ງໃຫ້ການຊ່ວຍເຫຼືອເພື່ອຊ່ວຍຄົນພິການທາງດ້ານການພັດທະນາການໃຫ້ມີຊີວິດຢູ່ຢ່າງເຕັມທີ່.

[Early Support for Infants & Toddlers (ESIT, ໂຄງການໃຫ້ການສະໜັບສະໜູນເບື້ອງຕົ້ນສຳລັບເດັກອ່ອນ ແລະ ເດັກນ້ອຍ) (ເປັນພາສາອັງກິດເທົ່ານັ້ນ)] – ໃຫ້ການບໍລິການເຂົ້າຊ່ວຍເຫຼືອເດັກຕັ້ງແຕ່ເກີດຮອດ 3 ປີ ທີ່ມີການຈະເລີນເຕີບໂຕຊັກຊ້າ ຫຼື ພິການ.

[Developmental Disabilities Administration (DDA, ໂຄງການໃຫ້ການບໍລິຫານຄວາມພິການທາງພັດທະນາການ) (ເປັນພາສາອັງກິດເທົ່ານັ້ນ)] – ໃຫ້ການບໍລິການ ແລະ ໂຄງການລວມທັງການດູແລສ່ວນຕົວ ແລະ ການພັກຜ່ອນ.

[Office of Superintendent of Public Instruction (OSPI, ສຳນັກງານຂອງຜູ້ກຳກັບການສິດສອນສາທາລະນະ)] – ເບິ່ງແຍງການໃຫ້ບໍລິການໂຮງຮຽນເຂດ.

[Office of the Education Ombuds (OEO, ສຳນັກງານຜູ້ກວດກາການສຶກສາຂອງລັດ) (ເປັນພາສາອັງກິດເທົ່ານັ້ນ)] – ສະໜອງຂໍ້ມູນກ່ຽວກັບ ແລະ ການແກ້ໄຂຂໍ້ຂັດແຍ່ງກັບໂຮງຮຽນເຂດ.

[The Arc (ເປັນພາສາອັງກິດ ເທົ່ານັ້ນ)] - ສະໜັບສະໜູນສິດທິຄົນພິການທຸກຄົນທາງດ້ານສະຕິປັນຍາ ແລະ ການພັດທະນາການ. [ບົດບັນຍັດທ້ອງຖິ່ນ (ເປັນພາສາອັງກິດເທົ່ານັ້ນ)] ໃຫ້ຂໍ້ມູນແກ່ຄອບຄົວ.

[Developmental Disabilities Council (DDC, ສະພາຄວາມພິການດ້ານການພັດທະນາການ) (ເປັນພາສາອັງກິດເທົ່ານັ້ນ)] – ວາງແຜນສຳລັບຄົນພິການທາງດ້ານການພັດທະນາການ ແລະ ຄອບຄົວຂອງເຂົາເຈົ້າ.

[DD Ombuds] - ເກັບກຳ ແລະ ສືບສວນສອບສວນການຮ້ອງຮຽນທີ່ນຳມາໂດຍຜູ້ທີ່ໃຊ້ບໍລິການຄວາມພິການດ້ານການພັດທະນາການ.



